ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມຫົວໜ້າເຄືອຂ່າຍກວດກາພາຍໃນທະນາຄານກາງອາຊຽນ ຄັ້ງທີ 7

# The 7th ASEAN Central Bank Heads of Internal Audit Network Meeting

# ເປັນເຈົ້າພາບຈັດປະຊຸມໂດຍ ປະເທດ ບຣູໄນ.




ໃນວັນທີ 08 ກັນຍາ 2022 ທີ່ຫ້ອງປະຊຸມຊັ້ນ II ກົມບໍລິການ ໄດ້ຈັດກອງກອງປະຊຸມຫົວໜ້າເຄືອຂ່າຍກວດກາພາຍໃນທະນາຄານກາງອາຊຽນ ຄັ້ງທີ 7 The 7th ASEAN Central Bank Heads of Internal Audit Network Meeting ຂຶ້ນຜ່ານລະບົບກອງປະຊຸມແບບທາງໄກ (Video conference) ຕາງໜ້າ ທຫລ ເຂົ້າຮ່ວມໂດຍ ທ່ານ ມະໂນສິນ ຕັນດາວົງ ຮອງຫົວໜ້າກົມກວດກາພາຍໃນ ທຫລ ພ້ອມດ້ວຍຄະນະເຂົ້າຮ່ວມ.





ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ແມ່ນສົນທະນາທາງດ້ານວິຊາການ ຈຳນວນ 5 ຫົວຂໍ້ຄື: **1**. ການປະຕິຮູບໜ່ວຍງານກວດສອບຂອງທະນາຄານກາງ ຂອງປະເທດອົດສະຕາລີ Transforming Reserve Bank of Australia's Audit Function ນຳສະເໜີໂດຍ Mr. Ross Tilly ປະທານສະຖາບັນນັກກວດສອບພາຍໃນ ປະເທດອົດສະຕາລີ; **2**.ການຄວບຄຸມໃນອານາຄົດ Future of Controls ນຳສະເໜີໂດຍ Mr. Gerald Seah ຜູ້ຈັດການອາວຸໂສຂອງບໍລິສັດ Deolitte and Touche ແຫ່ງປະເທດສິງກະໂປ; **3**. ຄວາມຄ່ອງແຄ້ວ, ຄວາມຍືດຍຸ່ນ, ຄວາມວ່ອງໄວ ຂອງການກວດສອບໃນອານາຄົດ The future of Adit: Versatility,Flexibility, Agility ນຳສະເໜີໂດຍ Mr. Daniel A. Clark ຜູ້ກໍ່ຕັ້ງ ແລະ ປະທານບໍລິສັດທີ່ປຶກສາດ້ານຄວາມສ່ຽງ; **4**. ເສັ້ນທາງສູ່ຄວາມຍືດຫຍຸ່ນຂອງອົງກອນຢ່າງຕໍ່ເນື່ອງຂອງເຮົາ Our Continuing Journey towards Organizational Resilience ນຳສະເໜີໂດຍ Mr. Pierre Gadpaille ຜູ້ຊ່ຽວຊານອາວຸໂສດ້ານການກວດສອບຂອງທະນາຄານພັດທະນາອາຊີ; **5**. ແຜນການປ່ຽນແປງການກວດສອບ Audit Transformation Plan ນຳສະເໜີໂດຍ Mr. Raja Mohamad Shahadan Raja Mohamad ຫົວໜ້າກົມປະກັນຄຸນນະພາບ, ການກວດສອບພາຍໃນ. ພ້ອມນັ້ນ, ໃນວາລະທ້າຍຂອງກອງປະຊຸມ ແມ່ນຈະມີການກຳນົດປະເທດເຈົ້າພາບ ແລະ ຫົວຂໍ້ ຂອງກອງປະຊຸມຄັ້ງຕໍ່ໄປ ($8^{th}$ ASEAN Central Banks Heads Meeting 2023).

ເຊິ່ງກອງປະຊຸມດັ່ງກ່າວ, ໄດ້ດຳເນີນໄປເປັນເວລາເຄິ່ງວັນ ດ້ວຍບັນຍາກາດອັນພົດຟື້ນ ແລະ ຕາມຈຸດປະສົງຄາດໝາຍທີ່ວາງໄວ້ ດ້ວຍຜົນສຳເລັດອັນຈົບງາມ.

ຂ່າວ ແລະ ພາບ ໂດຍ: ນ. ທິດສະບາ ທຳມະວົງສິງ